ວາລະສານວິທະຍາສາດມະຫາວິທະຍາໄລສຸພານຸວົງ, ຄົ້ນຄວ້າວິໄຈສະຫະສາຂາວິຊາ, ວາລະສານເປີດກວ້າງ
ສະບັບທີ 6, ເຫຼັ້ມທີ 2, ກໍລະກົດ-ທັນວາ 2020, ເລກທະບຽນ ISSN 2521-0653

# ປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງວຽງຄຳ ແຂວງ ຫຼວງພະບາງ[1]

**ສົມໝາຍ ສີລິວັນ[2], ກິນນາລີ ທິບພະພອນ, ບຸນມີ ແກ້ວຫາວົງ, ແຢະລີ ຈຸມໍ, ສົມຈິດ ເພັດມະນີ, ໄຊພອນ ຄົດໄຊໂຍ, ສີສະເກດ ຜົວຄຳພົມ ແລະ ໄຫວ ສີອຸດົມພັນ**

*ຫ້ອງການຄົ້ນຄວ້າວິທະຍາສາດ, ມະຫາວິທະຍາໄລສຸພານຸວົງ*

## ບົດຄັດຫຍໍ້

ການສຶກສາຄັ້ງນີ້ ແມ່ນສຶກສາກ່ຽວກັບ ປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງ ວຽງຄຳ ແຂວງ ຫຼວງພະບາງ. ໂດຍຈຳແນກປັດໄຈທີ່ຄົ້ນຄວ້າເປັນ 3 ດ້ານ ຄື: ປັດໄຈດ້ານສ່ວນຕົວ, ປັດໄຈດ້ານຄອບຄົວ ແລະ ປັດໄຈດ້ານສິ່ງແວດລ້ອມໃນໂຮງຮຽນ. ກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການສຶກສາ ແມ່ນນັກຮຽນຊັ້ນປະຖົມສຶກສາ ປ.3 - ປ.5 ທີ່ ເມືອງ ວຽງຄຳ ແຂວງ ຫຼວງພະບາງ ຈຳນວນ 159 ຄົນ, ເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າ ແມ່ນແບບສອບຖາມ ແລະ ສະຖິຕິ ທີ່ໃຊ້ໃນການວິເຄາະຂໍ້ມູນ ແມ່ນການວິເຄາະຫາຄ່າສຳປະສິດສະຫະສຳພັນຂອງ ເພຍສັນ ແລະ ການວິເຄາະການທົດຖອຍແບບ ພະຫຸຄູນ. ຜົນການຄົ້ນຄວ້າ ພົບວ່າ:

ປັດໄຈທີ່ມີຄວາມສຳພັນທາງລົບ ກັບ ບັນຫາການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງ ວຽງຄຳ ແຂວງ ຫຼວງ ພະບາງ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ມີ 8 ປັດໄຈ ໄດ້ແກ່ ຜົນການຮຽນຂອງນັກຮຽນ ($X_1$), ລາຍຮັບສະເລ່ຍຕໍ່ ເດືອນຂອງຄອບຄົວ ($X_2$), ບຸກຄະລິກກະພາບຂອງນັກຮຽນ ($X_3$), ນິດໄສທາງການຮຽນຂອງນັກຮຽນ ($X_4$), ຄວາມ ເອົາໃຈໃສ່ຕໍ່ການຮຽນຂອງຜູ້ປົກຄອງ ($X_5$), ສະຖານທີ່ຕັ້ງຂອງໂຮງຮຽນ ($X_6$), ການພົວພັນລະຫວ່າງ ນັກຮຽນ ກັບ ໝູ່ເພື່ອ ໃນຫ້ອງ ($X_7$) ແລະ ການພົວພັນລະຫວ່າງ ນັກຮຽນ ກັບ ຄູ ($X_8$). ແລະ ປັດໄຈທີ່ບໍ່ມີຄວາມສຳພັນກັບບັນຫາການຮຽນຂອງ ນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງ ວຽງຄຳ ແຂວງ ຫຼວງພະບາງ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ມີ 1 ປັດໄຈ ໄດ້ແກ່ ການພົວພັນລະຫວ່າງ ຄູ ກັບ ນັກຮຽນ ($X_9$).

ປັດໄຈທີ່ເປັນບັນຫາການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງວຽງຄຳ ແຂວງ ຫຼວງພະບາງ ດ້ວຍລະດັບຄວາມ ສຳຄັນ 0.01 ມີ 4 ປັດໄຈ ໂດຍການຈັດລຳດັບຈາກປັດໄຈທີ່ເປັນບັນຫາຫຼາຍທີ່ສຸດ ໄປຫາປັດໄຈທີ່ເປັນບັນຫາໜ້ອຍທີ່ສຸດ ຄື: ນິດໄສທາງການຮຽນຂອງນັກຮຽນ ($X_4$), ສະຖານທີ່ຕັ້ງຂອງໂຮງຮຽນ ($X_6$), ການປະພຶດຂອງນັກຮຽນຕໍ່ກັບຄູ ($X_8$) ແລະ ຜົນການຮຽນຂອງນັກຮຽນ ($X_1$) ສາມາດອະທິບາຍຄວາມປ່ຽນແປງຂອງປັດໄຈທີ່ເປັນບັນຕໍ່ການຮຽນຂອງນັກຮຽນ ໄດ້ເຖິງ 56.60%.

ສົມຜົນພະຍາກອນປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງວຽງຄຳ ແຂວງ ຫຼວງພະ ບາງ ໄດ້ດັ່ງນີ້:

1). ສົມຜົນພະຍາກອນປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນ ໃນຮູບແບບຄະແນນດິບ:

$$\hat{y} = 3.401 + 0.421X_4 + 0.192X_6 - 0.305X_8 - 0.113X_1$$

2). ສົມຜົນພະຍາກອນປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນ ໃນຮູບແບບຄະແນນມາດຖານ:

$$\hat{y} = 0.388X_4 + 0.256X_6 - 0.258X_8 - 0.207X_1$$

**ຄຳສຳຄັນ:** ປັດໄຈທີ່ເປັນບັນຫາ, ນັກຮຽນຊັ້ນປະຖົມສຶກສາ

---

[1] ***ການອ້າງອີງພາສາລາວ:*** ສົມໝາຍ ສີລິວັນ ແລະ ຄະນະ.(2019). **ປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງ ວຽງຄຳ ແຂວງ ຫຼວງພະບາງ**, *ວາລະສານວິທະຍາສາດມະຫາວິທະຍາໄລສຸພານຸວົງ, ສະບັບທີ: 6, ເຫຼັ້ມ 2, ໜ້າທີ: 224 - 234.*

[2] ***ຕິດຕໍ່ພົວພັນ****ສົມໝາຍ ສີລິວັນ, ບ່ອນສັງກັດ: ຫ້ອງການຄົ້ນຄວ້າວິທະຍາສາດ ມະຫາວິທະຍາໄລສຸພານຸວົງ, ໂທລະສັບຫ້ອງການ: 030 4588151, ມືຖື: 020 2235 0136 & 020 2981 5067, ອີເມວ: sommaysilivanh2017@gmail.com & ssilivanh@yahoo.com.*

# Factors Influencing on Students' Learning Problems at Primary School in Viengkham District, LuangPrabang Province

**Sommay SILIVANH[3], Kinnaly THIPPHAPHONE, Bounmy KEOHAVONG, Yelee CHOUMO, Saiphone KHOTSAIGNOH, Somchit PHETMANY, Sisaket PIEWKHAMPHOME, Vai SIOUDOMPHANH**

*Office Research and Academic Service, Souphanouvong University*

## Abstract

This research focuses on factors as problems influencing student learning quality at primary school in Viengkham district, LuangPrabang province. The factors included personal factors, family factors and school environment factors. The study was conducted with 159 primary students from grade 3 to grade 5 in 2019.

This quantitative research utilized questionnaires for data collection and the data were analyzed using the Pearson Product Moment Correlation Coefficient and Stepwise Multiple Regression Analysis. The study revealed, with the level of significance of 0.01, that six factors have significantly negative correlation influencing the problems of students' learning including Learning achievement ($X_1$), Average monthly household income ($X_2$), Personality ($X_3$), Parents' attention on student learning ($X_5$), Relationship with other students ($X_7$) and Relationship with teacher ($X_8$). The study also revealed significantly positive correlation on the factors influencing students' Learning problems including Learning behavior ($X_4$), and School location ($X_6$). Whereas, there was no significantly correlation in the factor of relationship between teacher and students ($X_9$). When ranking from the most to the least factors of problem influencing student learning, student learning behavior ($X_4$) is the most following by School location ($X_6$), relationship with teacher ($X_8$) and learning achievement ($X_1$) respectively. These four factors could be explained up to 56.60% through the following equation $\hat{y} = 3.401 + 0.421X_4 + 0.192X_6 - 0.305X_8 - 0.113X_1$ in terms of raw score of data and $\hat{y} = 0.388X_4 + 0.256X_6 - 0.258X_8 - 0.207X_1$ in terms of standard score of data.

**Keywords:** Factors influencing, Students' learning problems

[3] **Correspondence :**
*Sommay SILIVANH, Department of Research, Office Research and Academic Service, Souphanouvong University, Lao PDR.* Tel: *+856 020 2235 0136 & +856 020 2981 5067*,
*e-mail:* sommaysilivanh2017@gmail.com & ssilivanh@yahoo.com.

## 1. ພາກສະເໜີ

ການສຶກສາໃນລະດັບຊັ້ນປະຖົມສຶກສາ ເປັນການສຶກສາທີ່ແນໃສ່ເຮັດໃຫ້ນັກຮຽນໃຫ້ມີຄວາມຮູ້ ຄວາມສາມາດຂັ້ນພື້ນຖານ ແລະ ສາມາດເນັ້ນໃຫ້ອ່ານອອກ, ຂຽນໄດ້, ຄິດຄຳນວນໄດ້, ມີຄວາມສາມາດປະກອບອາ ຊີບໃດໜຶ່ງໄດ້ຕາມຄວາມເໝາະສົມຂອງຄວາມຮູ້ ຄວາມສາມາດ ຕາມອາຍຸ ແລະ ການດຳລົງຊີວິດ, ຈຶ່ງມີຄວາມສຳຄັນ ແລະ ຈຳເປັນທີ່ສຸດ ເຊິ່ງສອດຄ່ອງກັບ 7 ຍຸດທະສາດລະດັບຊາດ ຂອງກອງປະຊຸມໃຫຍ່ຄັ້ງທີ X ຂອງ ພັກປະຊາຊົນປະຕິວັດລາວ ກ່ຽວກັບຍຸດທະສາດການພັດທະນາຊັບພະຍາກອນມະນຸດ ໂດຍເລັ່ງໃສ່ພັດທະນາຄົນໃຫ້ມີຄຸນສົມບັດສົມທຳປະຕິວັດ, ມີສະຕິປັນຍາ, ມີສຸຂະພາບ ແລະ ຮ່າງກາຍແຂງແຮງ ດ້ວຍການສຶກສາອົບ ຮົມທາງດ້ານແນວຄິດການເມືອງ, ການຄຸ້ມຄອງກໍ່ສ້າງພະນັກງານ, ການປັບປຸງ ແລະ ປະຕິຮູບລະບົບການສຶກສາ. ນອກຈາກນັ້ນ, ຍັງໄດ້ປັບປຸງ ແລະ ຂະຫຍາຍການສຶກສາ ແລະ ກິລາຢ່າງມີຈຸດສຸມ ໄປຕາມຂອບມາດຕະຖານຄຸນນະພາບການສຶກສາແຫ່ງຊາດ, ຊຸກຍູ້, ສົ່ງເສີມປະຊາຊົນບັນດາເຜົ່າໄດ້ເຂົ້າເຖິງການສຶກສາ ແລະ ກິລາ ຕາມເງື່ອນໄຂ ແລະ ປະຕິບັດການສຶກສາປະຖົມພາກບັງຄັບໂດຍຈັດເປັນບູລິມະສິດໃຫ້ເຂດຊົນນະບົດ ຫ່າງໄກສອກຫຼີກ ແລະ ບ້ານ 3 ສ້າງ, (ກະຊວງສຶກທິການ ແລະ ກິລາ, 2016: 2).

ການຮຽນໃນລະດັບຊັ້ນປະຖົມ ຖືວ່າເປັນຮາກຖານສຳຄັນຂອງການພັດທະນາບຸກຄະລາກອນໃນຊາດ ອັນນຳໄປສູ່ການພັດທະນາປະເທດໃຫ້ຈະເລີນກ້າວໜ້າຕໍ່ໄປໃນອານາຄົດ. ດັ່ງນັ້ນ, ການສົ່ງເສີມພັດທະນາການທາງດ້ານຮ່າງກາຍ, ສະຕິປັນຍາ, ອາລົມ ແລະ ສັງຄົມ ຕະຫຼອດຮອດການພັດທະນາບຸກຄະລິກຄະພາບຂອງນັກ ຮຽນຊັ້ນປະຖົມ ຈຶ່ງມີຄວາມສຳຄັນ ແລະ ຈຳເປັນ ນັບໄດ້ວ່າເປັນການຮຽນທີ່ສຳຄັນຢ່າງຍິ່ງຕໍ່ພົນລະເມືອງສ່ວນໃຫຍ່ຂອງປະເທດ. ບັນຫາທີ່ເກີດຂຶ້ນນັ້ນ ແນ່ນອນວ່າຕ້ອງມີຜົນກະທົບຕໍ່ພັດທະນາການທຸກໆດ້ານຂອງນັກຮຽນ ແລະ ເປັນຮາກຖານໄປສູ່ບັນຫາໃນໄວຮຸ່ນ ແລະ ບັນຫາທີ່ປະກົດຂຶ້ນຢ່າງເຫັນໄດ້ຊັດເຈນທີ່ສຸດໃນກຸ່ມໄວຮຸ່ນນັ້ນ ຖ້າເຮົາມາພິຈາລະນາໃຫ້ເລິກເຊິ່ງ ຈະພົບວ່າ ສ່ວນໃຫຍ່ມີຮາກຖານມາຕັ້ງແຕ່ນ້ອຍ ຫຼື ເດັກນັກຮຽນໃນຊັ້ນປະ ຖົມນັ້ນເອງ. (ສຸວະພັດ ແກ້ວກູ້າ, 2011: 1).

ເມືອງ ວຽງຄຳ ເປັນເມືອງໜຶ່ງທີ່ຂຶ້ນກັບ ແຂວງ ຫຼວງພະບາງ ເຊິ່ງຕັ້ງຢູ່ທິດຕາເວັນອອກສ່ຽງເໜືອຫ່າງຈາກເທດສະບານ ແຂວງ ປະມານ 200 ກິໂລແມັດ, ມີເນື້ອທີ່ທັງໝົດ 2,143.67 ກິໂລຕາແມັດ, ເຊິ່ງມີຂອບເຂດຊາຍແດນຕິດຈອດກັບບັນດາເມືອງ ຄື: ທິດເໜືອຕິດກັບ ເມືອງ ໂພນທອງ, ທິດໃຕ້ຕິດກັບ ເມືອງ ປາກແຊງ ແລະ ເມືອງ ໂພນໄຊ, ທິດຕາເວັນອອກຕິດກັບເມືອງ ຮ້ຽມ (ແຂວງ ຫົວພັນ) ແລະ ທິດຕາເວັນຕົກຕິດກັບ ເມືອງ ງອຍ. ການຕັ້ງຖິ່ນຖານຂອງປະຊາຊົນສ່ວນໃຫຍ່ຕັ້ງຢູ່ລຽບຕາມເສັ້ນທາງຫຼວງແຫ່ງຊາດເລກ 1C, ຕາມສັນພູ ແລະ ແຄມແມ່ນ້ຳເຊືອງ, ນ້ຳແຊງ ຈຳນວນໜຶ່ງ ເຊິ່ງເປັນສາຍຫຼັກທີ່ຫຼໍ່ລ້ຽງຊີວິດການເປັນຢູ່ຂອງຊາວ ເມືອງ ວຽງຄຳ ເປັນເວລາດົນນານ, ເປັນເມືອງທີ່ມີອາກາດຊຸ່ມຊື່ນມີລົມປະຈຳລະດູພັດຜ່ານ. (ຫ້ອງການສຶກສາທິການ ແລະ ກິລາ ເມືອງ ວຽງຄຳ, 2018).

ດ້ວຍເຫດຜົນ ແລະ ບັນຫາທັງໝົດທີ່ໄດ້ກ່າວມາຂ້າງເທິງນັ້ນ ແລະ ເພື່ອປະຕິບັດຕາມ 7 ຍຸດທະສາດລະດັບຊາດ ຂອງກອງປະຊຸມໃຫຍ່ຄັ້ງທີ X ຂອງ ພັກປະຊາຊົນປະຕິວັດລາວ ກ່ຽວກັບຍຸດທະສາດການພັດທະນາຊັບພະຍາກອນມະນຸດ, ເພື່ອປະຕິບັດຕາມຈຸດປະສົງ, ຄາດໝາຍ ແລະ ວຽກງານຈຸດສຸມຂອງກະຊວງສຶກສາທິການ ແລະ ກິລາ ແລະ ປະຕິບັດຕາມວິໄສທັດຂອງ ມະຫາວິທະຍາໄລສຸພານຸວົງ ຄື "ລົງເລິກວິຊາສະເພາະ ພັດທະນາທ້ອງຖິ່ນ ກ້າວສູ່ມາດຕະຖານສາກົນ" ໃຫ້ປະກົດຜົນເປັນຈິງນັ້ນ ທີມງານຄົ້ນຄວ້າວິໄຈ ຈຶ່ງມີຄວາມສົນໃຈຢາກຈະສຶກສາ ປັດໃຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາຂອງແຂວງ ຫຼວງພະບາງ ໂດຍແນໃສ່ ເມືອງທຸກຍາກ ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ວ່າມີປັດໃຈອັນໃດແດ່ທີ່ເປັນບັນຫາ ເພື່ອຈະໄດ້ນຳເອົາຜົນຂອງການສຶກ

ສາຄົ້ນຄວ້າຄັ້ງນີ້ ໄປຜັນຂະຫຍາຍເຂົ້າໃນການປັບປຸງ ແກ້ໄຂ ແລະ ພັດທະນາການຮຽນຂອງນັກຮຽນຊັ້ນປະຖົມໃຫ້ມີຄຸນນະພາບທີ່ດີຂຶ້ນກວ່າເກົ່າ ແລະ ກ້າວທັນກັບສາກົນຢ່າງແທ້ຈິງ.

ຈຸດປະສົງຂອງການຄົ້ນຄວ້າໃນຄັ້ງນີ້ແມ່ນ 1). ເພື່ອວິເຄາະຄວາມສຳພັນລະຫວ່າງ ປັດໄຈດ້ານສ່ວນຕົວ, ປັດໄຈດ້ານຄອບຄົວ ແລະ ປັດໄຈດ້ານສິ່ງແວດລ້ອມໃນໂຮງຮຽນ ຕໍ່ກັບ ບັນຫາການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງ ວຽງຄຳ ແຂວງ ຫຼວງພະບາງ, 2). ເພື່ອວິເຄາະປັດໄຈດ້ານສ່ວນຕົວ, ປັດໄຈດ້ານຄອບຄົວ ແລະ ປັດໄຈດ້ານສິ່ງແວດລ້ອມໃນໂຮງຮຽນ ທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງ ວຽງຄຳ ແຂວງ ຫຼວງພະບາງ.

3). ເພື່ອສ້າງສົມຜົນພະຍາກອນ ທີ່ມີອຳນາດໃນການພະຍາກອນປັດໄຈທີ່ສົ່ງຜົນຕໍ່ບັນຫາການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງ ວຽງຄຳ ແຂວງ ຫຼວງພະບາງ.

## 2. ເຄື່ອງມື ແລະ ວິທີການຄົ້ນຄວ້າ

### 2.1 ເຄື່ອງມືໃນການເກັບຂໍ້ມູນ

ເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ ແມ່ນແບບຟອມສອບຖາມ (Questionnaires) ສໍາລັບນັກຮຽນ ກ່ຽວກັບ ປັດໃຈທີ່ສົ່ງຜົນຕໍ່ບັນຫາການຮຽນຂອງນັກຮຽນຊັ້ນປະຖົມແຕ່ ປ.3 - ປ.5 ໂດຍແບ່ງເປັນດ້ານ ດັ່ງນີ້:

ດ້ານທີ 1: ຂໍ້ມູນສ່ວນຕົວຂອງນັກຮຽນ

ດ້ານທີ 2: ບຸກຄະລິກຄະພາບຂອງນັກຮຽນ

ດ້ານທີ 3: ນິດໄສທາງດ້ານການຮຽນຂອງນັກຮຽນ

ດ້ານທີ 4: ຄວາມເອົາໃຈໃສ່ຕໍ່ການຮຽນຂອງຜູ້ປົກຄອງ

ດ້ານທີ 5 : ສະຖານທີ່ຕັ້ງຂອງໂຮງຮຽນ

ດ້ານທີ 6: ການພົວພັນລະຫວ່າງນັກຮຽນກັບ ໝູ່ເພື່ອນໃນຫ້ອງຮຽນ

ດ້ານທີ 8: ການພົວພັນລະຫວ່າງ ນັກຮຽນກັບຄູ

ດ້ານທີ 9: ການພົວພັນລະຫວ່າງ ຄູກັບນັກຮຽນ

ດ້ານທີ 10: ບັນຫາຕໍ່ການຮຽນຂອງນັກຮຽນ

### 2.2 ວິທີການຄົ້ນຄວ້າ

ຕົວຢ່າງທີ່ໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ ແມ່ນນັກຮຽນຊັ້ນປະຖົມສຶກສາແຕ່ ປ.3 - ປ.5 ທັງໝົດ 7 ໂຮງຮຽນ ລວມຈຳນວນນັກຮຽນທັງໝົດແມ່ນ 159 ຄົນ ໂດຍໃຊ້ວິທີການເລືອກຕົວຢ່າງແບບສະດວກ.

**ຕົວປ່ຽນໃນການຄົ້ນຄວ້າ:**

1.) ຕົວປ່ຽນຕາມ ປະກອບມີ: ບັນຫາການຮຽນ ຂອງນັກຮຽນຊັ້ນປະຖົມ

2.) ຕົວປ່ຽນຕົ້ນ ປະກອບມີ:

1. ປັດໄຈດ້ານສ່ວນຕົວຂອງນັກຮຽນຊັ້ນປະຖົມ ປ.3 - ປ.5 ປະກອບມີ:

- ຜົນການຮຽນໃນພາກຮຽນທີ 1 ຂອງນັກຮຽນຊັ້ນປະຖົມ
- ບຸກຄະລິກຄະພາບຂອງນັກຮຽນຊັ້ນປະຖົມ
- ນິດໄສດ້ານການຮຽນຂອງນັກຮຽນຊັ້ນປະຖົມ

2. ປັດໄຈດ້ານຄອບຄົວ ຂອງນັກຮຽນຊັ້ນປະຖົມ ປ.3 - ປ.5 ປະກອບມີ:

- ຄວາມເອົາໃຈໃສ່ຂອງຜູ້ປົກຄອງຕໍ່ການຮຽນຂອງນັກຮຽນຊັ້ນປະຖົມ
- ລາຍຮັບສະເລ່ຍຕໍ່ເດືອນຂອງຄອບຄົວຂອງນັກຮຽນຊັ້ນປະຖົມ

3. ປັດໄຈດ້ານສິ່ງແວດລ້ອມໃນໂຮງຮຽນ ຂອງນັກຮຽນຊັ້ນປະຖົມ ປ.3 - ປ.5 ປະກອບມີ:

- ສະຖານທີ່ຕັ້ງຂອງໂຮງຮຽນ
- ການພົວພັນລະຫວ່າງນັກຮຽນກັບໝູ່ເພື່ອນໃນຫ້ອງ
- ການພົວພັນລະຫວ່າງ ນັກຮຽນ ກັບ ຄູ
- ການພົວພັນລະຫວ່າງ ຄູ ກັບ ນັກຮຽນ

**ການວິເຄາະຂໍ້ມູນ:**

1.) ການວິເຄາະຂໍ້ມູນພື້ນຖານ ດ້ວຍການຫາຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຖານ (Standard Division) ດ້ວຍການນຳໃຊ້ Program SPSS ຊ່ວຍໃນການວິເຄາະ.

2.) ການວິເຄາະຫາຄວາມສໍາພັນລະຫວ່າງ ປັດໄຈດ້ານສ່ວນຕົວ, ປັດໄຈດ້ານຄອບຄົວ ແລະ ປັດໄຈດ້ານສິ່ງ ແວດລ້ອມໃນໂຮງຮຽນ ກັບ ບັນຫາການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງ ວຽງຄໍາ ແຂວງຫຼວງພະບາງ.

3). ວິເຄາະຫາປັດໄຈດ້ານສ່ວນຕົວ, ປັດໄຈດ້ານຄອບຄົວ ແລະ ປັດໄຈດ້ານສິ່ງແວດລ້ອມໃນໂຮງຮຽນ ທີ່ສົ່ງຜົນຕໍ່ບັນຫາການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງ ວຽງຄໍາ ແຂວງຫຼວງພະບາງ.




**ຮູບພາບ 1:** ຂອບເຂດແນວຄວາມຄິດຂອງການຄົ້ນຄວ້າ

## 3. ຜົນປະໂຫຍດຈາກການຄົ້ນຄວ້າ

ຜົນທີ່ໄດ້ຈາກການວິໄຈໃນຄັ້ງນີ້ ຈະເປັນປະໂຫຍດຕໍ່ ຜູ້ບໍລິຫານການສຶກສາ, ຄູສອນ ຕະຫຼອດຮອດຜູ້ປົກ ຄອງນັກຮຽນ ເພື່ອໃຊ້ເປັນຂໍ້ມູນປະກອບເຂົ້າໃສ່ໃນການວາງແຜນນະໂຍບາຍກ່ຽວກັບການແກ້ໄຂບັນຫາ, ການໃຫ້ຄວາມຊ່ວຍເຫຼືອທຸກດ້ານ ທີ່ສົ່ງຜົນຕໍ່ບັນຫາການຮຽນຂອງນັກຮຽນຊັ້ນປະຖົມ ໃນເຂດຊົນນະບົດ ແລະ ເຂດຫ່າງໄກຊອກຫຼີກ ທີ່ ເມືອງວຽງຄໍາ ແຂວງ ຫຼວງພະບາງ ເຊິ່ງເປັນ 1 ໃນ 4 ເມືອງທຸກຍາກຂອງ ແຂວງ ຫຼວງພະບາງ.

## 4. ຜົນການຄົ້ນຄວ້າ

ຕາຕະລາງ 1: ສະແດງເຖິງຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຖານ

| ສັນຍາລັກ ຕົວປ່ຽນ | ປັດໄຈ | $\overline{X}$ | SD | ແປ ຄວາມໝາຍ |
|---|---|---|---|---|
| $X_1$ | ຜົນການຮຽນໃນພາກຮຽນທີ 1 | 6.54 | 0.90 | ປານກາງ |
| $X_2$ | ລາຍຮັບສະເລ່ຍຕໍ່ເດືອນຂອງຄອບຄົວ | 343,755 | 61,315.09 | ທຸກຍາກ |
| $X_3$ | ບຸກຄະລິກຄະພາບຂອງນັກຮຽນ | 3.80 | 0.67 | ດີ |
| $X_4$ | ນິດໄສທາງການຮຽນຂອງນັກຮຽນ | 2.71 | 0.45 | ພໍໃຊ້ |
| $X_5$ | ຄວາມເອົາໃຈໃສ່ຕໍ່ການຮຽນຂອງຜູ້ປົກຄອງ | 3.38 | 0.57 | ພໍໃຊ້ |
| $X_6$ | ສະຖານທີ່ຕັ້ງຂອງໂຮງຮຽນ | 2.92 | 0.66 | ພໍໃຊ້ |
| $X_7$ | ການພົວພັນລະຫວ່າງ ນັກຮຽນ ກັບ ໝູ່ເພື່ອໃນຫ້ອງ | 3.77 | 0.32 | ດີ |
| $X_8$ | ການພົວພັນລະຫວ່າງ ນັກຮຽນ ກັບ ຄູ | 3.78 | 0.42 | ດີ |
| $X_9$ | ການພົວພັນລະຫວ່າງ ຄູ ກັບ ນັກຮຽນ | 2.44 | 0.33 | ພໍໃຊ້ |
| Y | ບັນຫາການຮຽນຂອງນັກຮຽນ | 3.20 | 0.49 | ປານກາງ |

ຕາຕະລາງ 2: ສະແດງເຖິງຜົນການວິເຄາະຄວາມສຳພັນຂອງແຕ່ລະຕົວປ່ຽນ

| | Y | $X_1$ | $X_2$ | $X_3$ | $X_4$ | $X_5$ | $X_6$ | $X_7$ | $X_8$ | $X_9$ |
|---|---|---|---|---|---|---|---|---|---|---|
| Y | 1.00 | -.516** | -.374** | -.477** | -.651** | -.528** | -.308** | -.241** | -.496** | .015 |
| $X_1$ | | 1.00 | .192* | .537** | -.557** | .417** | -.140* | .137* | .223* | .008 |
| $X_2$ | | | 1.00 | .118 | -.241* | .227* | -.545** | .095 | .171* | -.077 |
| $X_3$ | | | | 1.00 | -.658** | .567** | .177* | .347** | .593** | -.151* |
| $X_4$ | | | | | 1.00 | -.587** | .068 | -.251* | -.504** | .024 |
| $X_5$ | | | | | | 1.00 | -.116 | .403** | .628** | -.066 |
| $X_6$ | | | | | | | 1.00 | -.155* | .016 | .049 |
| $X_7$ | | | | | | | | 1.00 | .322** | -.366** |
| $X_8$ | | | | | | | | | 1.00 | -.308** |
| $X_9$ | | | | | | | | | | 1.00 |

ຈາກຕາຕະລາງ 2 ເຫັນວ່າ ປັດໄຈທີ່ມີຄວາມສຳພັນທາງລົບ ກັບ ບັນຫາການຮຽນຂອງນັກຮຽນຊັ້ນ ປະຖົມສຶກສາ ທີ່ ເມືອງ ວຽງຄຳ ແຂວງ ຫຼວງພະບາງ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ມີ 8 ປັດ

ໃຈ ໄດ້ແກ່ ຜົນການຮຽນຂອງນັກຮຽນ ($X_1$), ລາຍຮັບສະເລ່ຍຕໍ່ເດືອນຂອງຄອບຄົວ ($X_2$), ບຸກຄະລິກຄະພາບຂອງນັກຮຽນ ($X_3$), ນິດໄສທາງການຮຽນຂອງນັກຮຽນ ($X_4$), ຄວາມເອົາໃຈໃສ່ຕໍ່ການຮຽນຂອງຜູ້ປົກຄອງ ($X_5$), ສະຖານທີ່ຕັ້ງຂອງໂຮງຮຽນ ($X_6$), ການພົວພັນລະຫວ່າງ ນັກຮຽນ ກັບ ໝູ່ເພື່ອນໃນຫ້ອງ ($X_7$) ແລະ ການພົວພັນລະຫວ່າງ ນັກຮຽນ ກັບ ຄູ ($X_8$). ປັດໄຈທີ່ບໍ່ມີຄວາມສໍາພັນກັບບັນຫາການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງ ວຽງຄໍາ ແຂວງ ຫຼວງພະບາງ ດ້ວຍລະດັບຄວາມສໍາຄັນທາງສະຖິຕິ 0.01 ມີ 1 ປັດໄຈ ໄດ້ແກ່ ການພົວພັນລະຫວ່າງ ຄູ ກັບ ນັກຮຽນ($X_9$).

ຕາຕະລາງ 3: ສະແດງເຖິງຜົນການວິເຄາະຄວາມຜັນປ່ຽນ ເພື່ອຄົ້ນຫາປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງວຽງຄໍາ ແຂວງ ຫຼວງພະບາງ

| | SS | df | MS | F | Sig |
|---|---|---|---|---|---|
| Regression | 22.009 | 4 | 5.502 | 50.274 | 0.000 |
| Residual | 16.855 | 154 | 0.109 | | |
| Total | 38.864 | 158 | | | |

ຈາກຕາຕະລາງ 3 ເຫັນວ່າ ມີ 4 ປັດໄຈ ທີ່ສາມາດພະຍາກອນບັນຫາການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງວຽງຄໍາ ແຂວງ ຫຼວງພະບາງ ໂດຍມີຄວາມສໍາພັນກັນໃນຮູບແບບເສັ້ນຊື່ ກັບ ຕົວປ່ຽນຕົ້ນ ທັງ 4 ປັດໄຈ ດ້ວຍລະດັບຄວາມສໍາຄັນ 0.01 ດັ່ງລາຍລະອຽດໃນຕາຕະລາງ 4.4 ລຸ່ມນີ້:

ຕາຕະລາງ 4: ສະແດງເຖິງຜົນການວິເຄາະປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງ ວຽງຄໍາ ແຂວງ ຫຼວງພະບາງ

| ປັດໄຈ | b | $SE_b$ | $\beta$ | R | $R^2$ | F |
|---|---|---|---|---|---|---|
| $X_4$ | -0.421 | 0.078 | -0.388 | 0.651 | 0.424 | 115.341 |
| $X_4$ $X_6$ | -0.192 | 0.040 | -0.256 | 0.702 | 0.493 | 75.892 |
| $X_4$ $X_6$ $X_8$ | -0.305 | 0.073 | -0.258 | 0.733 | 0.537 | 60.013 |
| $X_4$ $X_6$ $X_8$ $X_1$ | -0.113 | 0.035 | -0.207 | 0.753 | 0.566 | 50.274 |

$a = 3.401$

$R = 0.753$

$R^2 = 0.566$

$SE_{est} = 0.330$

ຈາກຕາຕະລາງ 4.4 ເຫັນວ່າ ປັດໄຈທີ່ເປັນບັນຫາການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ເມືອງວຽງຄຳ ແຂວງ ຫຼວງພະບາງ ດ້ວຍລະດັບຄວາມສຳຄັນ 0.01 ມີ 4 ປັດໄຈ ໂດຍການຈັດລຳດັບຈາກປັດໄຈທີ່ເປັນບັນຫາຫຼາຍທີ່ສຸດ ໄປຫາປັດໄຈທີ່ເປັນບັນຫາໜ້ອຍທີ່ສຸດ ຄື: ນິດໄສທາງການຮຽນຂອງນັກຮຽນ ($X_4$), ສະຖານທີ່ຕັ້ງຂອງໂຮງຮຽນ ($X_6$), ການປະພຶດຂອງນັກຮຽນຕໍ່ກັບຄູ ($X_8$) ແລະ ຜົນການຮຽນຂອງນັກຮຽນ($X_1$) ເຊິ່ງປັດໄຈທັງ 4 ປັດໄຈນີ້ ສາມາດອະທິບາຍຄວາມປ່ຽນແປງຂອງປັດໄຈທີ່ເປັນບັນຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ເມືອງວຽງຄຳ ແຂວງ ຫຼວງພະບາງ ໄດ້ເຖິງ 56.60%.

ຈຶ່ງສາມາດນຳເອົາຄ່າສຳປະສິດຂອງຕົວປ່ຽນພະຍາກອນມາຂຽນເປັນສົມຜົນພະຍາກອນປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງວຽງຄຳ ແຂວງຫຼວງພະບາງ ໄດ້ດັ່ງນີ້:

1). ສົມຜົນພະຍາກອນປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງວຽງຄຳ ແຂວງ ຫຼວງພະບາງ ໃນຮູບແບບຄະແນນດິບ:

$$\hat{y} = 3.401 - 0.421\mathrm{X}_4 - 0.192\mathrm{X}_6 - 0.305\mathrm{X}_8 - 0.113\mathrm{X}_1$$

2). ສົມຜົນພະຍາກອນປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງວຽງຄຳ ແຂວງ ຫຼວງພະບາງ ໃນຮູບແບບຄະແນນມາດຖານ:

$$\mathrm{Z} = -0.388\mathrm{X}_4 - 0.256\mathrm{X}_6 - 0.258\mathrm{X}_8 - 0.207\mathrm{X}_1$$

**5. ສະຫຼຸບ**

ປັດໄຈທີ່ມີຄວາມສຳພັນທາງລົບ ກັບ ບັນຫາການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງວຽງຄຳ ແຂວງ ຫຼວງພະບາງ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ມີ 8 ປັດໄຈ ໄດ້ແກ່ ຜົນການຮຽນຂອງນັກຮຽນ ($X_1$), ລາຍຮັບສະເລ່ຍຕໍ່ເດືອນຂອງຄອບຄົວ ($X_2$), ບຸກຄະລິກຄະພາບຂອງນັກຮຽນ ($X_3$), ນິດໄສທາງການຮຽນຂອງນັກຮຽນ ($X_4$), ຄວາມເອົາໃຈໃສ່ຕໍ່ການຮຽນຂອງຜູ້ປົກຄອງ ($X_5$), ສະຖານທີ່ຕັ້ງຂອງໂຮງຮຽນ ($X_6$), ການພົວພັນລະຫວ່າງນັກຮຽນ ກັບ ໝູ່ເພື່ອໃນຫ້ອງ ($X_7$) ແລະ ການພົວພັນລະຫວ່າງ ນັກຮຽນ ກັບ ຄູ ($X_8$).

ປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງວຽງຄຳ ແຂວງ ຫຼວງພະບາງ ດ້ວຍລະດັບຄວາມສຳຄັນ 0.01 ມີ 4 ປັດໄຈ ໂດຍການຈັດລຳດັບຈາກປັດໄຈທີ່ເປັນບັນຫາຫຼາຍທີ່ສຸດ ໄປຫາປັດໄຈທີ່ເປັນບັນຫາໜ້ອຍທີ່ສຸດ ຄື: ນິດໄສທາງການຮຽນຂອງນັກຮຽນ ($X_4$), ສະຖານທີ່ຕັ້ງຂອງໂຮງຮຽນ ($X_6$), ການປະພຶດຂອງນັກຮຽນຕໍ່ກັບຄູ ($X_8$) ແລະ ຜົນການຮຽນຂອງນັກຮຽນ ($X_1$) ເຊິ່ງປັດໄຈທັງ 4 ປັດໄຈນີ້ ສາມາດອະທິບາຍຄວາມປ່ຽນແປງຂອງປັດໄຈທີ່ເປັນບັນຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງວຽງຄຳ ແຂວງ ຫຼວງພະບາງ ໄດ້ເຖິງ 56.60%.

ສົມຜົນພະຍາກອນປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງວຽງຄຳ ແຂວງ ຫຼວງພະບາງ ມີດັ່ງນີ້:

1. ສົມຜົນພະຍາກອນປັດໄຈທີ່ເປັນບັນຫາການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງວຽງຄຳ ແຂວງ ຫຼວງພະບາງ ໃນຮູບແບບຄະແນນດິບ:

$$\hat{y} = 3.401 - 0.421X_4 - 0.192X_6 - 0.305X_8 - 0.113X_1$$

2. ສົມຜົນພະຍາກອນປັດໄຈທີ່ເປັນບັນຫາຕໍ່ການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ ເມືອງວຽງຄຳ ແຂວງ ຫຼວງພະບາງ ໃນຮູບແບບຄະແນນມາດຖານ:

$$\hat{y} = -0.388X_4 - 0.256X_6 - 0.258X_8 - 0.207X_1$$

**6. ຄຳຂອບໃຈ**

ທີມງານຄົ້ນຄວ້າ ພວກຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈເປັນຢ່າງສູງມາຍັງການນໍາຂອງ ມະຫາວິທະຍາໄລສຸພານຸວົງ ທີ່ໃຫ້ໂອກາດ ແລະ ອໍານວຍຄວາມສະດວກໃນການຄົ້ນຄວ້າຄັ້ງນີ້ ບໍ່ວ່າຈະເປັນທາງດ້ານງົບປະມານທີ່ສະໜັບສະໜູນໃນການຄົ້ນຄວ້າ, ການໃຫ້ຄໍາປຶກສາ ແລະ ການແນະນໍາທີ່ເປັນຂໍ້ຄິດເຫັນຕ່າງໆທີ່ເປັນຜົນປະໂຫຍດໃນການເຮັດບົດຄົ້ນຄວ້າຈົນໄດ້ຮັບຜົນສໍາເລັດໄປດ້ວຍດີ. ຂອບໃຈມາຍັງ ທີມງານຄົ້ນຄວ້າທຸກໆທ່ານ ທີ່ໄດ້ເອົາໃຈໃສ່ຮ່ວມມືທາງດ້ານຄວາມຮູ້ ຄວາມສາມາດ ແລະ ກໍາລັງແຮງ ເຂົ້າໃນການສຶກສາຄົ້ນຄວ້າມາໂດຍຕະຫຼອດ, ຂອບໃຈເປັນຢ່າງສູງມາຍັງ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາ ເມືອງ ວຽງຄໍາ ແຂວງ ຫຼວງພະບາງ, ອໍານວຍການໂຮງຮຽນປະຖົມແຕ່ລະແຫ່ງ ຕະຫຼອດຮອດອໍານາດການປົກຄອງບ້ານ ແລະ ນັກຮຽນຊັ້ນປະຖົມສຶກສາ ທີ່ໄດ້ສະຫຼະເວລາ ແລະ ໃຫ້ຄວາມຮ່ວມມືໃນການອໍານວຍຄວາມສະດວກ ແລະ ສະໜອງຂໍ້ມູນໃຫ້ແກ່ທີມງານຂອງພວກຂ້າພະເຈົ້າ ຈົນປະສົບຜົນສໍາເລັດເປັນຢ່າງດີ.

**6. ເອກະສານອ້າງອີງ**

ກະຊວງສຶກທິການ ແລະ ກິລາ, ວິໄສທັດ ຮອດປີ 2030 ຍຸດທະສາດ ຮອດປີ 2025 ແລະ ແຜນພັດທະນາຂະ ແໜງການສຶກສາ ແລະ ກິລາ 5 ປີ 2016 – 2020, 2015.

ກົດໝາຍວ່າດ້ວຍການສຶກສາຂອງ ສ ປ ປ ລາວ (ສະບັບປັບປຸງ), ນະຄອນຫຼວງວຽງຈັນ ວັນທີ 16 ກໍລະກົດ 2015: 1.

ສຸວະພັດ ແກ້ວກູ້າ, ປັດໃຈທີ່ສົ່ງຜົນຕໍ່ບັນຫາການຮຽນຂອງນັກຮຽນຊ່ວງຊັ້ນທີ 2 ໂຮງຮຽນນະວັດເມທັງກາລະວາດ ແຂວງແພ່ ປະເທດໄທ, ປີ 2554: 1.

ເສີມສີ ຊື່ນຊວງ, ປັດໃຈທີ່ສົ່ງຜົນຕໍ່ເຈຕະຄະຕິຕໍ່ຮູບແບບການຮຽນຮູ້ ວິຊາດົນຕີຂອງນັກຮຽນໂຮງຮຽນດົນຕີສະຫຍາມກົນລະການນຸຊະພາສາຂາສີລົມ ເຂດບາງລັກ ກຸງເທບມະຫານະຄອນ ປະລິນຍານິພົນ ກສ.ມ. (ຈິດຕະວິທະຍາການສຶກສາ). ກຸງເທບ: ບັນທິດວິທະຍາໄລ ມະຫາວິທະຍາໄລ ສຣີນະຄະລິນທຣ໌ວິໂລດ, ປີ 2546.

ຊຸຕິມົນ ສຣີແກ້ວ, ປັດໃຈທີ່ສົ່ງຜົນຕໍ່ການຮຽນຮູ້ທີ່ເນັ້ນຜູ້ຮຽນເປັນໃຈກາງຂອງນັກຮຽນ ຊັ້ນມັດທະຍົມສຶກສາຕອນຕົ້ນ ໂຮງຮຽນສາລະວິທະຍາ ເຂດຈະຕຸຈັກ ກຸງເທບມະຫານະຄອນ ປະລິນຍານິພົນ ກສ.ມ. (ຈິດຕະວິທະຍາການສຶກສາ). ກຸງເທບ: ບັນທິດວິທະຍາໄລ ມະຫາວິທະຍາໄລ ສຣີນະຄະລິນທຣ໌ວິໂລດ, ປີ 2546.

ນັນທະວົດ ເຜົ່າມະຫານາຄະ, ປັດໃຈທີ່ສົ່ງຜົນຕໍ່ເຈຕະຄະຕິ

ຕໍ່ການປະກອບອາຊີບວິສະວະກໍາສາດ ຂອງນັກສຶກສາ ມະຫາວິທະຍາໄລເທັກໂນໂລຊີລາດຊະມຸງຄຸນພຣະນະຄອນ ວິທະຍາເຂດໂຊຕິເວດ ເຂດດຸສິດ ກຸງເທບມະຫານະຄອນ ສາລະນິພົນ ກສ.ມ. (ຈິດຕະວິທະຍາການສຶກສາ). ກຸງເທບ: ບັນທິດວິທະຍາໄລ ມະຫາວິທະຍາໄລ ສຣີນະຄະລິນທຣ໌ວິໂລດ, ປີ 2548.

ພັນຄໍາ ວິພາວັນ, ລັດຖະມົນຕີວ່າການ ກະຊວງສຶກສາທິການ ແລະ ກິລາ ຂຽນໃນບົດຄໍານໍາຂອງວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII ແຕ່ປີ 2016 - 2020, ປີ 2016

ເພັດຊະລີ ໄຊມູນ, ປັດໃຈທີ່ມີອິດທິພົນຕໍ່ການຮຽນຮູ້ຂອງນັກຮຽນຊັ້ນປະຖົມສຶກສາ ປີທີ 6 ໃນໂຮງຮຽນສັງກັດສໍານັກງານເຂດພື້ນທີ່ການສຶກສາເລີຍ ເຂດ 1: ໂດຍໃຊ້ການວິເຄາະແບບພະ ຫຸບົດ ສົມຜົນຖົດຖອຍ, ປະລິນຍາຄູສາດມະຫາບັນດິດ ສາຂາວິຊາວິໄຈ ແລະ ປະເມີນ

ຜົນການສຶກສາ ມະຫາວິທະຍາໄລ ລາດສະພັດເລີຍ, ປີ 2552: ບົດຄັດຫຍໍ້.

ວິສາ ສໍາລານໃຈ, ປັດໃຈທີ່ສົ່ງຜົນສໍາເລັດທາງການຮຽນ ວິຊາຄະນິດສາດ ຂອງນັກຮຽນຊັ້ນປະຖົມສຶກສາ ປີທີ 6 ສັງກັດສໍານັກງານເຂດພື້ນທີ່ການສຶກສາເລີຍ ເຂດ 1: ໂດຍໃຊ້ການວິເຄາະແບບພະຫຸບົດ ສົມຜົນຖົດຖອຍ, ປະລິນຍາຄູສາດມະຫາບັນດິດ ສາຂາວິຊາວິໄຈ ແລະ ປະເມີນຜົນການສຶກສາ ມະຫາວິທະຍາ ໄລ ລາດສະພັດເລີຍ, ປີ 2552: ບົດຄັດຫຍໍ້.

ວອນນະວິພາ ຊຶ່ນສະຫງວນ, ປັດໃຈທີ່ສົ່ງຜົນຕໍ່ການຮັບຮູ້ໃນການຮຽນຮ່ວມກັບເດັກທີ່ມີຄວາມຕ້ອງການພິເສດຂອງນັກຮຽນ ປີທີ 2 ໂຮງຮຽນສາທິດແຫ່ງ ມະຫາວິທະຍາໄລກະເສດສາດ ສູນວິໄຈ ແລະ ພັດທະນາການສຶກສາເຂດຈະຕຸລັກ ກຸງເທບມະຫານະຄອນ ສາລະນິພົນ ກສ.ມ. (ຈິດຕະວິທະຍາການສຶກສາ). ກຸງເທບ: ບັນທິດວິທະຍາໄລ ມະຫາວິທະຍາໄລ ສຣີນະຄະລິນທຣ໌
ວິໂລດ, ປີ 2552.

ວັນລະພາ ເທບຫັດສະດິນ ນະອາຍຸດທະຍາ, ການປ່ຽນແປງຂອງສັງຄົມ ກັບ ການພັດທະນາເດັກໄທ ການສຶກສາຊັ້ນປະຖົມ, ປີ 2537.

ໜ່ວຍງານສະຖິຕິ-ຂໍ້ມູນຂ່າວສານ ຫ້ອງການສຶກສາທິການ ແລະ ກິລາ ເມືອງ ວຽງຄໍາ ແຂວງ ຫຼວງພະບາງ, ບົດສະຫຼຸບຈໍານວນຄູສອນ, ໂຮງຮຽນ ແລະ ນັກຮຽນ ເມືອງ ວຽງຄໍາ ສົກປີ 2020.

ກະຊວງສຶກສາທິການ ແລະ ກິລາ, http://moes.edu.la/moes/index.php/52-2016-07-08-03-25-06/131-2014-2015, 6/2/2018, 15:04 h

RamaMental . (2019). ຄະນະແພດສາດ, ມະຫາວິທະຍາໄລມະຫິດົນ. Retrieved from https://med.mahidol.ac.th/: https://med.mahidol.ac.th/ramamental/generalknowledge/05142014-1115

Zimbardo and Ruch . (2016). ບຸກຄະລິກະພາບ. Retrieved from https://sites.google.com/: https://sites.google.com/site/personality009/bukhlikphaph

ກຸນຊະຣີ ຄ້າຂາຍ. (2016). ນິດໄສທາງການຮຽນທີ່ດີ. Retrieved from kaipopok.wordpress.com: https://kaipopok.wordpress.com/%E0%B8%AB%E0%B8%A5%E0%B8%B2%E0%B8%81%E0%B8%AB%E0%B8%A5%E0%B8%B2%E0%B8%A2/

ສຸເມດ ພົງເພດຣາ. (2015). ປັດໄຈທີ່ມີຜົນຕໍ່ສໍາພັນທະພາບຂອງເພື່ອນັກຮຽນ. ກຸງເທບ: ມະຫາວິທະຍາໄລສີນະຄະຣິນທະວິໂຣດ.

ວິໄຊ ວົງໃຫຍ່. (ບໍ່ລະບຸປີ). ເດັກທີ່ມີຄວາມສາມາດພິເສດ. Retrieved from www.curriculumandlearning.com: http://www.curriculumandlearning.com/upload/Academicpapers/7_1435646588.

ສັກໄຊ ຜູ່ຈະເລີນ. (2018). ປະຕິສໍາພັນລະຫວ່າງຄູກັບນັກຮຽນ. In ປະຕິສໍາພັນລະຫວ່າງຄູກັບນັກຮຽນ (p. 6). ມະຫາວິທະຍາໄລຣາຊພັດນະຄອນຣາຊສີມາ.

ທະວີສັກ ສິລິລັກເລຂາ. (2020). ຄວາມບົກພ່ອງທາງດ້ານສະຕິປັນຍາ. Retrieved from www.happyhomeclinic.com: https://www.happyhomeclinic.com/academy/sp05-mr.pdf

ນິຕະຍາ ສີຈໍານົງ. (ບໍ່ລະບຸປີ). การพยาบาลผู้ทมี่ คีวามผดิปกติทางด้านความคิดและการรับร้ ู:. Retrieved from http://www.elnurse.ssru.ac.th/: http://www.elnurse.ssru.ac.th/nitaya_si/pluginfile.php/22/block_html/content/

ພົມພັນ ເຕຊະຄຸບ. (2017). ຜົນສໍາເລັດທາງການຮຽນ. Retrieved from

http://www.nana-bio.com/: http://www.nana-bio.com/Research/image%20research/research%20work/Achievement/Achievement01.html

ພີຣະຍາ ທຳທະວີວຸດ. (2015). ບຸກຄະລິກະພາບ 5 ຢ່າງ. Retrieved from thaihealthlife.com: https://thaihealthlife.com/

ມະນັດ ສູງປະສິດ. (2019). ອິດທິພົນຂອງຄອບຄົວທີ່ມີຕໍ່ເດັກໂດຍກົງ. Retrieved from www.rama.mahidol.ac.th: https://www.rama.mahidol.ac.th/ramachannel/home/article/

ມາຣຸລິດ ດີສະຫວັດມົງຄົນ. (2019). ພະຍາດສະມາທິສັ້ນ. Retrieved from www.bangkokhospital.com: https://www.bangkokhospital.com/th/disease-treatment/adhd-disorder

ວິໄນ ແກ້ວນ້ອຍ. (2017). New Learning Environment. Retrieved from Education Technology and Communication : https://sites.google.com/site/winaik103/263-601/new-learning-environment

ວັນລະນາ ຈິລານົນ. (2014). ความสำคัญของบุคลิกภาพ. Retrieved from www.baanjomyut.com: https://www.baanjomyut.com/library_2/extension-1/introduction_to_personality/02.html